ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 28 ສິງຫາ ຫາ 01 ກັນຍາ 2023



ຊາວກະສິກອນໜຸ່ມຜູ້ປູກຜັກແບບໄຮໂດໂປນິກ ທີ່ບ້ານຫຼັກຂາວ
ເມືອງ ທາແຕງ ແຂວງ ເຊກອງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ຊາວກະສິກອນໜຸ່ມ ຜູ້ປູກຜັກແບບໄຮໂດໂປນິກ ທີ່ບ້ານຫຼັກຂາວ ເມືອງ ທ່າແຕງ ແຂວງ ເຊກອງ

ຂຽນໂດຍ: ນ.ສີອຳມອນ ໄຊຍະລາດ

ການປູກຜັກແບບລະບົບໄຮໂດໂປນິກ ຫຼື ການປູກຜັກໃສ່ນ້ຳແບບບໍ່ມີດິນ ເປັນໜຶ່ງໃນນະວັດຕະກຳທີ່ຖືວ່າຍັງເປັນເລື່ອງທີ່ແປກໃໝ່ສຳລັບຊາວກະສິກອນລາວ ເຊິ່ງເປັນອີກຮູບແບບໜຶ່ງທີ່ຈະຊ່ວຍລຶດບັນຫາການປູກພືດແບບປົກກະຕິທີ່ໃຊ້ດິນ ເຊິ່ງມັກພົບກັບບັນຫາພະຍາດ ແລະ ແມງໄມ້ ລວມທັງບັນຫາສະພາບການປ່ຽນແປງດິນຟ້າອາກາດໂດຍສະເພາະໃນລະດູຝົນ ເຊິ່ງການປູກແບບນີ້ຈະຊ່ວຍໃຫ້ມີຜົນຜະລິດສະໜອງໃຫ້ຜູ້ບໍລິໂພກໄດ້ໃນທຸກລະດູການສາມາດກຳນົດໄລຍະເວລາການເກັບກ່ຽວຕາມແຜນການຜະລິດໄດ້.

ທ່ານ ຈັນທະລັງສີ ແກ້ວມະນີຈຳປາ ເປັນໜຶ່ງໃນຊາວສວນທີ່ປູກຜັກແບບໄຮໂດໂປນິກ ທີ່ບ້ານ ຫຼັກຂາວ, ເມືອງ ທ່າແຕງ, ແຂວງ ເຊກອງ ໄດ້ສຳພາດກັບທີມງານ ວາລະສານກະສິກຳ ແລະ ປ່າໄມ້ ໃຫ້ຮູ້ວ່າ: ກ່ອນທີ່ຈະຫັນມາປູກຜັກແບບໄຮໂດໂປນິກ ເມື່ອກ່ອນໄດ້ປູກພືດຜັກໃສ່ດິນແບບບໍ່ໄດ້ມີເຮືອນຮົ່ມແລ້ວມັກພົບບັນຫາພະຍາດແມງໄມ້ຂ້ອນຂ້າງຫຼາຍ ປູກລະດູຝົນບໍ່ໄດ້ຮັບຜົນເທົ່າທີ່ຄວນ. ສະນັ້ນ, ຈຶ່ງຊອກຫາຊ່ອງທາງການປູກແບບໃໝ່ໆເພື່ອພັດທະນາການປູກພືດ ຕໍ່ມາໄດ້ມີໂຄງການມາຊ່ວຍສະໜັບສະໜູນກ່ຽວກັບການປູກຜັກໃນເຮືອນຮົ່ມໂດຍໄດ້ຮັບການສະໜັບໜູນເຮືອນຮົ່ມປູກຜັກຈາກໂຄງການກອຍກາ ແລະ ເອດີບີ ລວມເປັນທັງໝົດ 7 ຫຼັງ ເຮັດໃຫ້ການປູກພືດຜັກແມ່ນມີຜົນຜະລິດດີຂຶ້ນມາເລື່ອຍໆ ແຕ່ຕົນເອງກໍ່ຍັງຢາກພັດທະນາການປູກໃນຮູບແບບໃໝ່ໆອີກ ແລະ ໄດ້ເລີ່ມສຶກສາບົດຮຽນຈາກບັນດາສື່ອອນລາຍຂອງຕ່າງປະເທດໃນໄລຍະໜຶ່ງ ແລ້ວມາທົດລອງປະຕິບັດດ້ວຍຕົນເອງ ບວກໃສ່ກັບຄວາມມັກ ແລະ ມີພື້ນຖານການປູກພືດຜັກ ເຮັດໃຫ້ເກີດຜົນສຳເລັດ ແລະ ສາມາດຖ່າຍທອດບົດຮຽນໃຫ້ສັງຄົມໄດ້.







ທ່ານ ຈັນທະລັງສີ ຍັງໄດ້ກ່າວຕື່ມອີກວ່າການປູກຜັກແບບໄຮໂດຼໂປຼນິກນີ້ ສຳລັບຜູ້ທີ່ມີພື້ນທີ່ໜ້ອຍ ແລະ ບໍ່ມີເວລາຫຼາຍ ກໍ່ແມ່ນສາມາດປູກໄດ້ເນື່ອງຈາກມີຄວາມສະດວກສະບາຍໃນການບົວລະບັດ, ຕົວຢ່າງໃນເຮືອນຮົ່ມ 6x12 ແມັດທີ່ຂ້າພະເຈົ້າໃຊ້ປູກ ແມ່ນສາມາດປູກໄດ້ທັງໝົດ 200 ກ່ອງ, ໄດ້ລົງທຶນຊື້ອຸປະກອນນັບແຕ່ກ່ອງໂຟມ, ຖ້ວຍປູກ, ປຸ໋ຍ ແລະ ອຸປະກອນຕ່າງໆ ມີຕົ້ນທຶນທັງໝົດປະມານ 12.600.000 ກີບ ເຊິ່ງຄິດໄລ່ແລ້ວແມ່ນຈະປູກໄດ້ທັງໝົດ 15-16 ຄັ້ງ, ຜົນຜະລິດໄລ່ສະເລ່ຍ 3 ກ່ອງໂຟມແມ່ນໄດ້ພືດຜັກ 1 ກິໂລກຼາມ, ລາຄາຂາຍກໍໄດ້ດີ ປະມານ 35.000 -40.000 ກີບ ຢ່າງຕ່ຳຕໍ່ກິໂລກຼາມ ໂດຍສະເພາະລະດູຝົນ ທີ່ເປັນລະດູປູກພືດຜັກຍາກ, ສຳລັບການໃຊ້ທາດອາຫານ (ປຸ໋ຍທາງນ້ຳ) ແມ່ນຈະໃຊ້ງວດໜຶ່ງປະມານ 5-6 ລິດ ຄິດໄລ່ເປັນເງິນ 170.000-180.000 ກີບ/ງວດ ຖ້າທຽບໃສ່ການປູກແບບໃສ່ປຸ໋ຍທົ່ວໄປທີ່ມີລາຄາເກືອບເທົ່າທຽມກັນ ແຕ່ຜົນໄດ້ຮັບຕ່າງກັນ ເຊິ່ງເຫັນວ່າການປູກແບບໄຮໂດໂປຼນິກແມ່ນດີກວ່າ, ໄດ້ພືດຜັກສະອາດ ແລະ ປອດໄພກວ່າປູກແບບທົ່ວໆໄປ, ປັດຈຸບັນຂ້າພະເຈົ້າໄດ້ລົງທຶນປູກໃນຕົ້ນທຶນ 12 ລ້ານກວ່າກີບ ເກັບຜົນຜະລິດແລ້ວຈຳນວນ 4 ງວດ ໄດ້ຂາຍຜົນຜະລິດ ແລະ ຮັບເງິນທັງໝົດ 7.440.000 ກີບ, ຖ້າປູກຄົບຈຳນວນງວດ 15-16 ງວດແມ່ນຈະໄດ້ຮັບເງິນປະມານ 30 ກວ່າລ້ານ, ຫັກຕົ້ນທຶນອອກກໍຈະໄດ້ຢູ່ 17-18 ລ້ານສຳລັບລົງທຶນງວດທຳອິດຖືວ່າຄຸ້ມຄ່າ, ສ່ວນການປູກຄັ້ງຕໍ່ໆໄປແມ່ນຊື້ແຕ່ປຸ໋ຍ ຈະເຮັດໃຫ້ຜົນໄດ້ຮັບຫຼັງຈາກນັ້ນເປັນລາຍໄດ້ຕໍ່ເດືອນ, ໃນສ່ວນທີ່ຂ້າພະເຈົ້າປູກຢູ່ປັດຈຸບັນນີ້ສ່ວນໃຫຍ່ແມ່ນຈຳພວກຜັກກິນໃບເຊັ່ນ: ຜັກສະລັດ, ເຊີລາລີ, ຫອມປ້ອມ, ຜັກບົ່ວ ແລະ ອື່ນໆ. ການປູກກໍເຫັນວ່າມີຄວາມແຕກຕ່າງຈາກການປູກຜັກແບບທຳມະດາຫຼາຍ ເພາະການ



ປູກໃນຮູບແບບນີ້ເຮົາຈະຮູ້ວັນປູກ ແລະ ວັນເກັບກ່ຽວໄດ້ເກືອບ 100 ສ່ວນຮ້ອຍ ສາມາດກຳນົດວ່າຜັກປູກເດືອນໃດຈະເກັບຂາຍໄດ້ໃນເດືອນໃດ, ສົມມຸດຜັກທີ່ມີອາຍຸເກັບກ່ຽວ 40 ວັນ, ເມື່ອເຖິງ 40 ວັນ ເຮົາກໍ່ສາມາດເກັບກ່ຽວ ແລະ ຂາຍໄດ້ຕາມອາຍຸ, ການເຕີບໂຕແມ່ນຈະໄວກວ່າການປູກໃນດິນ ຖ້າທຽບໃສ່ຜັກຊະນິດດຽວປູກໃສ່ດິນອາຍຸ 40 ວັນ ບາງເທື່ອກໍ່ຍັງບໍ່ສາມາດເກັບຜົນຜະລິດໄດ້ ແລະ ເຮົາກໍ່ກຳນົດບໍ່ໄດ້, ແນະນຳຕື່ມສຳລັບຜູ້ທີ່ສົນໃຈຢາກປູກຜັກແບບໄຮໂດໂປຼນິກ ສິ່ງສຳຄັນໃນການປູກນັ້ນຜູ້ປູກຕ້ອງເຂົ້າໃຈເລິກເຊິ່ງກ່ຽວກັບຂໍ້ມູນພື້ນຖານ ວິທີການປູກໃຫ້ລະອຽດກ່ອນ ເພື່ອການວາງໃຫ້ສອດຄ່ອງກັບຕົ້ນທຶນທີ່ເຮົາລົງທຶນໄປ ເພາະການປູກແບບນີ້ແມ່ນໃຊ້ຕົ້ນທຶນເບື້ອງຕົ້ນທີ່ຂ້ອນຂ້າງສູງ ດັ່ງນັ້ນ ການວາງແຜນການຈັດການຕ້ອງມີຄວາມລະອຽດ ຈຶ່ງລົງມືປະຕິບັດ, ສະເພາະທາດອາຫານຢູ່ລາວເຮົາແມ່ນມີແຕ່ການວາງຈຳໜ່າຍຕາມຮ້ານຂາຍເຄື່ອງກະເສດ ແລະ ການສັ່ງຊື້ຈາກຕ່າງປະເທດ ການນຳໃຊ້ແມ່ນຈະໄດ້ໜ້ອຍ ຫຼື ຫຼາຍແມ່ນຂຶ້ນກັບການປະສົມ ເພາະທາງສວນເຮົາໃຊ້ແບບແຫ້ງເວລາຈະໃຊ້ແມ່ນປະສົມຕາມປະລິມານທີ່ຈະໃຊ້ການປະສົມຄັ້ງໜຶ່ງແມ່ນໃຊ້ໄດ້ 2-3 ເດືອນ ເພື່ອປະສິດທິພາບຂອງປຸ໋ຍ, ສຳລັບການຕະຫຼາດຈາກປະສົບການເປັນຜູ້ຜະລິດ ແລະ ຜູ້ຂາຍຕົວຈິງເຫັນວ່າຕະຫຼາດເຫັນວ່າ ຍັງມີຄວາມຕ້ອງການພືດຜັກສະອາດຫຼາຍ. ສະນັ້ນ, ຢາກເຊີນຊວນຊາວກະສິກອນທີ່ປູກລະບົບໃນດິນຢາກໃຫ້ລອງມາປູກແບບໄຮໂດໂປຼນິກເພາະການປູກແບບນີ້ແມ່ນດີຕໍ່ຜູ້ຜະລິດ ແລະ ຜູ້ບໍລິໂພກ ສຳລັບຜູ້ທີ່ສົນໃຈສາມາດຖອດຖອນບົດຮຽນ ແລະ ຮຽນຮູ້ໄດ້ທີ່ສວນຂອງພວກເຮົາ ສະຖານທີ່ຕັ້ງຢູ່ບ້ານຫຼັກຂາວ, ເມືອງ ທ່າແຕງ, ແຂວງ ເຊກອງ. ເບີໂທຕິດຕໍ່ 020 7662 9446 (ທ່ານ ຈັນທະລັງສີ ແກ້ວມະນີຈຳປາ)

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;